IT

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 75 /ນຍ

ນະຄອນຫລວງວຽງຈັນ, ວັນທີ 28.02.2018

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມໜັງສືສະເໜີ ສະບັບເລກທີ 3643/ຮສສ, ລົງວັນທີ 16 ຕຸລາ 2017 ແລະ ສະໂນດນຳສົ່ງ ສະບັບ ເລກທີ 0020/ຫກ, ລົງວັນທີ 4 ມັງກອນ 2018 ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
- ອີງຕາມໜັງສືສະເໜີ ສະບັບເລກທີ 33/ພນ, ລົງວັນທີ 29 ມັງກອນ 2018 ຂອງກະຊວງພາຍໃນ.

## ນາຍົກລັດຖະມົນຕີອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດ ເພື່ອເປັນບ່ອນອີງ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ແນໃສ່ການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການປະສານງານ, ຕິດຕາມ, ຊຸກຍູ້ສົ່ງເສີມກ່ຽວກັບວຽກງານປ້ອງກັນ ແລະ ຄວບຄຸມໄພພິບັດ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ ຂຽນເປັນຕົວອັກສອນຫຍໍ້ວ່າ "ຄພຊ" ແມ່ນການຈັດຕັ້ງໜຶ່ງຂອງລັດ ທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການຊ່ວຍລັດຖະບານ ໃນການຄົ້ນຄວ້າ, ຊີ້ນຳ ແລະ ປະສານງານ ກັບບັນດາກະຊວງ, ອົງການທຽບເທົ່າຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຂັ້ນຕ່າງໆ ແລະ ສາກົນ ໃນການຄົ້ນຄວ້າ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວຽກງານປ້ອງກັນ, ຕອບໂຕ້ ແລະ ແກ້ໄຂຜົນຮ້າຍຈາກໄພພິບັດ ທີ່ກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ, ຕໍ່ຊັບສິນ ແລະ ຊີວິດ ຂອງປະຊາຊົນ ໃນຂອບເຂດທົ່ວປະເທດ.

### ມາດຕາ 3 ອະທິບາຍຄຳສັບ

ໃນດຳລັດສະບັບນີ້ ມີຄວາມໝາຍ ຂອງບັນດາຄຳສັບ ດັ່ງລຸ່ມນີ້:

1. ໄພພິບັດ ໝາຍເຖິງ ສິ່ງທີ່ເປັນໄພອັນຕະລາຍ ເກີດຈາກທຳມະຊາດ ຫລື ຈາກນ້ຳມືຂອງມະນຸດ (ລົມພະຍຸ, ນ້ຳຖ້ວມ, ແຫ້ງແລ້ງ, ແຜ່ນດິນໄຫວ, ດິນເຈື່ອນ, ສັດຕູພືດ, ພະຍາດລະບາດຮ້າຍແຮງ, ອັກຄີໄພ, ສົງຄາມ

ແລະ ອື່ນໆ) ເຊິ່ງກໍ່ໃຫ້ເກີດມີຜົນເສຍຫາຍ ຢ່າງຮ້າຍແຮງຕໍ່ຊີວິດ ແລະ ຊັບສິນ ຂອງປະຊາຊົນ ແລະ ຂອງລັດ.

2. ການປ້ອງກັນ ແລະ ຄວບຄຸມໄພພິບັດ ໝາຍເຖິງວຽກງານປ້ອງກັນ, ກຽມພ້ອມ, ຫລຸດຜ່ອນຜົນກະທົບ, ການຊ່ວຍເຫຼືອຕອບໂຕ້ສຸກເສີນ, ການສ້ອມແປງ ແລະ ກໍ່ສ້າງຄືນໃໝ່ ແລະ ແກ້ໄຂຜົນຮ້າຍ ທີ່ເກີດຂຶ້ນຈາກໄພພິບັດຕ່າງໆ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 4 ໜ້າທີ່

1. ປະຕິບັດນິຕິກຳ ຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ ແລະ ນາຍົກລັດຖະມົນຕີ ວາງອອກຢ່າງເຂັ້ມງວດ;
2. ຄົ້ນຄວ້າ, ຫັນເອົາແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ນະຕິຕິກລົງ ຂອງລັດຖະບານ ກ່ຽວກັບວຽກງານປ້ອງກັນ ແລະ ຄວບຄຸມໄພພິບັດ ມາເປັນແຜນຍຸດທະສາດ, ແຜນປະຕິບັດງານຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ ແລະ ປະກົດຜົນເປັນຈິງ;
3. ຊ່ວຍກະຊວງ, ອົງການລັດທຽບເທົ່າກະຊວງ ຄົ້ນຄວ້າຮ່າງນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານປ້ອງກັນ ແລະ ຄວບຄຸມໄພພິບັດ ຕາມການມອບໝາຍ ເພື່ອສະເໜີຕໍ່ນາຍົກລັດຖະມົນຕີ ແລະ ລັດຖະບານ ຫຼື ກະຊວງ ພິຈາລະນາ;
4. ຊ່ວຍກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຜັນຂະຫຍາຍແຜນຍຸດທະສາດ, ແຜນປະຕິບັດງານ ກ່ຽວກັບການປ້ອງກັນ ແລະ ຄວບຄຸມໄພພິບັດ ເຊື່ອມສານເຂົ້າໃນແຜນການເຄື່ອນໄຫວ ເປັນແຕ່ລະໄລຍະຂອງຕົນ;
5. ໂຄສະນາ, ເຜີຍແຜ່ແນວທາງ, ແຜນນະໂຍບາຍ ກ່ຽວກັບວຽກງານປ້ອງກັນ ແລະ ຄວບຄຸມໄພພິບັດ, ແຜນຍຸດທະສາດຫຼຸດຜ່ອນຄວາມສ່ຽງໄພພິບັດ ຂອງລັດຖະບານ ແຫ່ງ ສປປ ລາວ ໃຫ້ຕ່າງປະເທດ, ອົງການຈັດຕັ້ງສາກົນ ຮັບຮູ້ ແລະ ສະໜັບສະໜູນ;
6. ໂຄສະນາປຸກຈິດສຳນຶກໃຫ້ແກ່ທຸກຊັ້ນຄົນໃນສັງຄົມ ມີຄວາມເຂົ້າໃຈຕໍ່ໄພອັນຕະລາຍ ແລະ ຜົນຮ້າຍຂອງໄພພິບັດ ແລະ ປະກອບສ່ວນເຂົ້າໃນວຽກງານປ້ອງກັນ ແລະ ຄວບຄຸມໄພພິບັດ;
7. ລາຍງານສະພາບຜົນເສຍຫາຍ ແລະ ຄວາມຕ້ອງການຊ່ວຍເຫລືອສຸກເສີນໃຫ້ແກ່ລັດຖະບານ;
8. ຊີ້ນຳຈັດຕັ້ງປະຕິບັດແຜນການ, ມາດຕະການ, ເຕັກນິກວິຊາການຕ່າງໆ ໃນການກຽມພ້ອມ, ປ້ອງກັນ, ຊ່ວຍເຫຼືອຕອບໂຕ້ສຸກເສີນ ແລະ ຟື້ນຟູຫຼັງໄພພິບັດ ໃຫ້ສູ່ສະພາບປົກກະຕິໂດຍໄວ;
9. ປຸກລະດົມກຳລັງແຮງທາງດ້ານວັດຖຸ, ທຶນຮອນ ແລະ ເຕັກນິກວິຊາການ ຈາກທົ່ວສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມໃນວຽກງານປ້ອງກັນ ແລະ ຄວບຄຸມໄພພິບັດ;
10. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ກອງທຶນຄຸ້ມຄອງໄພພິບັດ ແລະ ລະບົບເກັບແຮເຄື່ອງຊ່ວຍເຫລືອສຸກເສີນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການເງິນ;
11. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປ້ອງກັນ ແລະ ຄວບຄຸມໄພພິບັດ;
12. ຈັດຕັ້ງປະຕິບັດສັນຍາ, ອະນຸສັນຍາ, ຍຸດທະສາດ ແລະ ແຜນປະຕິບັດງານ ສາກົນຕ່າງໆ ກ່ຽວກັບວຽກງານປ້ອງກັນ ແລະ ຄວບຄຸມໄພພິບັດ ເປັນຕົ້ນແຜນປະຕິບັດງານເຊັນໄດ ກ່ຽວກັບການຫລຸດຜ່ອນຄວາມສ່ຽງໄພພິບັດ, ສັນຍາອາຊຽນ ວ່າດ້ວຍການຄຸ້ມຄອງໄພພິບັດ ແລະ ການຕອບໂຕ້ຕໍ່ເຫດການສຸກເສີນ ຢູ່ ສປປ ລາວ ແລະ ອື່ນໆ ທີ່ກ່ຽວຂ້ອງ ໃຫ້ໄດ້ຮັບຜົນດີ;